


# ທຄຕລ ໄດ້ຮັບລາງວັນ ດີເດັ່ນປະເພດ I ທີ່ມີຜົນງານ ແລະ ຄຸນນະພາບການໃຫ້ບໍລິການ ປະຈຳປີ 2025 ຈາກ ບໍລິສັດ LAPNet

**ຂ່າວໂດຍ:** ຂະແໜງພົວພັນນັກລົງທຶນ & ຮ່ວມມືສາກົນ https://www.bcel.com.la// bcelhqv@bcel.com.la




## ໃນວັນສຸກ, ວັນທີ 30 ມັງກອນ 2026

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ໄດ້ເຂົ້າຮ່ວມ ພິທີສະຫຼຸບຜົນການດຳເນີນງານ ຂອງບໍລິສັດ LAPNet ປະຈຳປີ 2025 ໂດຍໄດ້ຮັບກຽດການເປັນປະທານ ໂດຍ **ທ່ານ ມະໂນລິດ ຊຸມພົນພັກດີ** ປະທານສະພາບໍລິຫານ ບໍລິສັດ LAPNet, ຫົວໜ້າກົມຄຸ້ມຄອງລະບົບການຊຳລະ ທະນາຄານແຫ່ງ ສປປ ລາວ ແລະ ເຂົ້າຮ່ວມໂດຍ ບັນດາສະມາຊິກສະພາບໍລິຫານບໍລິສັດ LAPNet, ຄະນະກົມຄຸ້ມຄອງລະບົບການຊຳລະ ແລະ ພ້ອມດ້ວຍຄະນະຜູ້ບໍລິຫານຈາກສະມາຊິກທີ່ເປັນທະນາຄານ ແລະ ບໍລິສັດ Fintech.







ໃຫ້ກຽດຂຶ້ນກ່າວມີຄຳເຫັນໂດຍ **ທ່ານ ນາງ ລຳພອນ ສີມມະລາວົງ (ຮອງຫົວໜ້າກົມຄຸ້ມຄອງລະບົບການຊຳລະ, ທຫລ)** ເພື່ອໃຫ້ຮູ້ເຖິງ ທິດທາງໃນຕໍ່ໜ້າ ແລະ ແຜນການພັດທະນາລະບົບການຊຳລະຂອງ ສປປ ລາວ ໃນໄລຍະ 5 ປີ ທີ່ຜ່ານມາ (2021-2025) ທີ່ LAPNet ທີ່ໄດ້ເຮັດໜ້າທີ່ເປັນໂຄງລ່າງພື້ນຖານສຳຄັນໃນລະບົບການຊຳລະຢູ່ພາຍໃນ ສປປ ລາວ ແລະ ເປັນພັນເຟືອງໜຶ່ງທີ່ສຳຄັນໃນການຂັບເຄື່ອນເສດຖະກິດດີຈິຕອນຂອງຊາດ.

ພາຍໃນງານ ຍັງມີການມອບລາງວັນ LAPNet AWARDS 2025 ໃຫ້ແກ່ສະມາຊິກທີ່ມີຜົນງານ ແລະ ຄຸນນະພາບການໃຫ້ບໍລິການ ຜ່ານລະບົບ LAPNet. ເຊິ່ງ ທຄຕລ ໄດ້ຮັບກຽດຂຶ້ນຮັບ ລາງວັນດີເດັ່ນປະເພດ I ຂອງສະມາຊິກທີ່ມີຜົນງານ ແລະ ຄຸນນະພາບການໃຫ້ບໍລິການ ປະຈຳປີ 2025 ໂດຍແມ່ນ **ທ່ານ ກາລະເກດ ສຸດຕາວົງ (ຫົວໜ້າສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ)** ເປັນຜູ້ຕາງໜ້າ ທຄຕລ ຂຶ້ນຮັບລາງວັນໃນຄັ້ງນີ້.